## ກະຊວງກະສິກຳ ແລະ ສິ່ງແວດລ້ອມ

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

**ປະກາດຮັບສະໝັກພະນັກງານ** - Request for Expression of Interest (REOI)

ຕຳແໜ່ງ: **ພະນັກງານ ຕິດຕາມ ແລະ ປະເມີນຜົນ ເມືອງ** ຈຳນວນ 1 ຕຳແໜ່ງ,
ປະຈຳຫ້ອງການໂຄງການ ປຊກ ເມືອງງາ ແຂວງອຸດົມໄຊ.

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຮັບພະນັກງານສັນຍາຈ້າງ ຕຳແໜ່ງ **ຕິດຕາມ ແລະ ປະເມີນຜົນ** ເມືອງ ຈຳນວນ 01 ຕຳແໜ່ງ ເພື່ອມາປະຈຳຢູ່ຫ້ອງການໂຄງການ ປຊກ ເມືອງງາ ແຂວງອຸດົມໄຊ:

2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນສົມບັດຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ຍື່ນເອກະສານສະໝັກດ້ວຍຕົນເອງ ທາງອີເມວ ສົ່ງມາຕາມທີ່ຢູ່ Email: **info.hr@clearlaos.org** ຫລື ສົ່ງທີ່ຫ້ອງການ ປຊກ ເມືອງງາ ແຂວງອຸດົມໄຊ ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

   - ➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:
     - ລະດັບທາງດ້ານການສຶກສາ: ຕ້ອງຮຽນຈົບມີໃບປະກາດວິຊາຊີບຊັ້ນສູງຂຶ້ນໄປ ໃນສາຂາການຄຸ້ມຄອງ-ບໍລິຫານໂຄງການ, ວິທະຍາສາດສັງຄົມ, ການພັດທະນາຊົນນະບົດ, ເສດຖະສາດ ແລະ ບໍລິຫານທຸລະກິດ, ເສດຖະສາດກະສິກຳ, ການເງິນ ຫຼື ສາຂາອື່ນທີ່ກ່ຽວຂ້ອງ;
     - ປະສົບການການເຮັດວຽກຜ່ານມາ: ຢ່າງໜ້ອຍ 2 ປີ ໃນການວາງແຜນໂຄງການ, ປະເມີນໂຄງການ, ການເກັບກຳຂໍ້ມູນພາກສະໜາມ, ການສຳພາດ ແລະ ການລາຍງານ;
     - ມີທັກສະທາງດ້ານຄອມພິວເຕີ ໂດຍສາມາດນຳໃຊ້ໂປແກຣມ Microsoft Office (Word, Excel, PowerPoint) ແລະ ນຳໃຊ້ອິນເຕີເນັດ ເຊັ່ນ: Google Drive (Docs, Sheets, Slides, Forms);
     - ສາມາດເດີນທາງໄປເຮັດວຽກໃນເຂດຊົນນະບົດ.
   - ➢ ເອກະສານຍື່ນສະໝັກ ປະກອບມີ:
     - ໃບຄຳຮ້ອງຍື່ນສະໝັກງານ: ໃຫ້ລະບຸລະອຽດຊື່ຕຳແໜ່ງທີ່ສະໝັກ, ສະຖານທີ່ຫ້ອງການ ທີ່ສະເໜີເຂົ້າປະຈຳການ. ພ້ອມທັງປະສົບການຜ່ານມາທີ່ຄ້າຍຄືກັບວຽກທີ່ຍື່ນສະໝັກ, ລາຍຊື່ ແລະ ເບີໂທລະສັບ ຂອງຜູ້ທີ່ສາມາດຢັ້ງຢືນໃຫ້ທ່ານ ແລະ ທາງໂຄງການສາມາດສອບຖາມໄດ້ ປະມານ 3 ທ່ານ;
     - ຊີວະປະຫວັດຂອງຜູ້ຍື່ນສະໝັກ ພ້ອມຮູບຖ່າຍ (ລະບຸລະອຽດ ກ່ຽວກັບລະດັບການສຶກສາ ແລະ ປະສົບການເຮັດວຽກຜ່ານມາ);
     - ສຳເນົາໃບປະກາດຈົບການສຶກສາ ແລະ ໃບຄະແນນ, ໃບຢັ້ງຢືນຜ່ານການຝຶກອົບຮົມຕ່າງໆ;
     - ສຳເນົາໃບຢັ້ງຢືນການເຮັດວຽກຜ່ານມາ ວຽກທີ່ຄ້າຍຄືກັບວຽກນີ້, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ບັດປະຈຳຕົວ, ໃບຂັບຂີ່.

3. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ປຊກ ສູນກາງ, ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ໂທ: 021 261 479 - 80 ຕໍ່ 105 ຫລື ເຂົ້າເບິ່ງໃນເວັບໄຊ໌ ຂອງໂຄງການທີ່: http://clearlaos.org/vacancy.

4. ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ສົ່ງທາງອີເມວ ທີ່: info.hr@clearlaos.org ຫລື ສົ່ງທີ່ຫ້ອງການ ປຊກ ເມືອງງາ ແຂວງອຸດົມໄຊ. ຫ້ອງການໂຄງການ ປຊກ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ/ໂທລະສັບ ພາຍຫລັງທີ່ໄດ້ຮັບອະນຸມັດແລ້ວ, **ວັນທີປິດຮັບເອກະສານຍື່ນສະໝັກ ແມ່ນວັນທີ 20 ມັງກອນ 2026.**

ນະຄອນຫລວງວຽງຈັນ, ວັນທີ 02 ມັງກອນ 2026.

ຮອ. ຜູ້ອຳນວຍການ

ປອ. ວົງປະພັນ ມະນີວົງ